# ການພະນັນ




ຈິນດາ ແລະ ຊ້ອຍ ເປັນພີ່ນ້ອງກັນ. ຊ້ອຍ ອາໄສຢູ່ກັບປ້າຂອງລາວ, ປ້າໄຊ
ຜູ້ທີ່ຫຼິ້ນການພະນັນເປັນປະຈຳ.
ຫຼ້າໆ! ມາໆຫຼິ້ນໄພ້ກັບພວກບໍ່?
ຫຼານບໍ່ຢາກຫຼິ້ນ! ການພະນັນເປັນສິ່ງທີ່ບໍ່ດີ.
ແຕ່ປ້າຂອງຂ້ອຍບອກວ່າ ມັນມ່ວນແລະເຮົາສາມາດ ໄດ້ເງິນອີກ!
ຫຼານຫຼິ້ນນຳແດ່ໄດ້ບໍ?


ເມື່ອປ້າໄຊເສຍເງິນ, ລາວກໍຢືມເງິນຈາກເພື່ອນບ້ານເພື່ອຫຼິ້ນຕໍ່ໄປອີກ,
ຫວັງວ່າຈະໄດ້ເງິນຄືນ.
ເສຍອີກແລ້ວ.....
ໃຫ້ຂ້ອຍຢືມເງິນແດ່?
ຄືນມື້ໜຶ່ງ......
ມື້ໃດເຈົ້າຊິ
ໃຊ້ເງິນຂ້ອຍ?
ຂ້ອຍຊິຂາຍໂທລະທັດ.
ນີ້ກໍຍັງບໍ່ພໍຢູ່.
ບາງທີ
ເທື່ອນີ້ຂ້ອຍອາດຈະໂຊກດີ.


ບໍ່ຢາກເຊື່ອເລີຍວ່າ
ຂ້ອຍຊິເສຍອີກ!
ຂ້ອຍເສຍເງິນໝົດແລ້ວ!
ເຮີ້ຍ! ໃສເງິນຂ້ອຍຫັ້ນ!
ຮອດເວລາຈ່າຍຄືນແລ້ວ.
ປ້າໄຊ ໄດ້ໄປຫາໝູ່ຜູ້ທີ່ລາວສະໜິດທີ່ສຸດ
ເພື່ອວ່າລາວຈະສາມາດຢືມເງິນນຳໄດ້.
ເຈົ້າກິນເຂົ້ານຳພວກເຮົາໄດ້,
ແຕ່ຂ້ອຍບໍ່ມີເງິນໃຫ້ເຈົ້າຢືມ.


ຄືນນັ້ນ....
ຂ້ອຍເຮັດຫຍັງ ຄືຈັ່ງມາໂຊກຮ້າຍແນວນີ້?
ຄືກັບບັນພະບູລຸດຂອງຂ້ອຍ, ຂ້ອຍຕິດການພະນັນ ແລະ ສູນເສຍໝົດທຸກສິ່ງ. ຂ້ອຍຄິດວ່າມັນໄດ້ເຂົ້າມາສູ່ຄອບຄົວ.
ຕອນເຊົ້າໆ ມື້ຕໍ່ມາ.....
ຕື່ນໆຂ້ອຍພວກເຮົາ ຕ້ອງໜີອອກຈາກເຮືອນໄປ.


ແຕ່ຫຼານບໍ່ຢາກຈາກໝູ່ຂອງຫຼານ
ທີ່ຢູ່ນີ້.
ຫຼານຢູ່ຕໍ່ໄປໄດ້ ແຕ່ປ້າຕ້ອງໄປ.
ປ້າຕິດໜີ້ຫຼາຍໂພດ.
ຊ້ອຍ ແລ່ນໄປທີ່ບ້ານພີ່ນ້ອງຂອງລາວ.
ມີຫຍັງເກີດຂຶ້ນຊ້ອຍ.
ຊ້ອຍ ບອກທຸກສິ່ງທີ່ເກີດຂຶ້ນໃຫ້ຈິນດາຟັງ.
ຂ້ອຍເກີດມາຈາກເຊື້ອສາຍທີ່
ຕິດການພະນັນມາຫຼາຍເຊັ່ນຄືນ.
ຂ້ອຍອາຍຕົວເອງ ແລະ ຄອບຄົວຫຼາຍ.


ເຈົ້າບໍ່ຕ້ອງຮູ້ສຶກລະອາຍດອກ. ທຸກຄອບຄົວມີທັງຈຸດດີ ແລະ ຈຸດອ່ອນ. ຄອບຄົວຂອງເຈົ້າກໍຄົງຈະມີຈຸດພິເສດຢູ່, ແມ່ນບໍ?
ແມ່ນແລ້ວ, ຈຸດພິເສດຂອງ ພວກເຮົາຄືສາມາດຫັກ ເສື່ອເຄື່ອງນຸ່ງງາມໆໄດ້.
ເຫັນບໍ? ຍັງມີບາງສິ່ງທີ່ດີຢູ່.
ຈິນດາໄດ້ອະທິຖານເພື່ອຊ້ອຍ.
ພຣະເຈົ້າຂໍໂຜດຊ່ວຍປ້າຂອງ ຂ້ານ້ອຍດ້ວຍເຖີ້ນ.
ພຣະເຈົ້າຂໍໂຜດປົດປ່ອຍ ເພິ່ນອອກຈາກການພະນັນ ແລະອວຍພອນເພິ່ນດ້ວຍເຖີ້ນ.



ມື້ຕໍ່ມາມີກຸ່ມເດັກນ້ອຍກຳລັງຫຼິ້ນໄພ້ຢູ່.
ເຮີ້ຍ, ເຈົ້າສອງຄົນ! ຢາກມາຫຼິ້ນໄພ້ນຳພວກເຮົາບໍ່?
ຂ້ອຍຈະຜ່ານມັນໄປ. ຂ້ອຍບໍ່ຫຼິ້ນການພະນັນອີກແລ້ວ.
ເຈົ້າຢາກຮູ້ວິທັກແສ່ວເຄື່ອງບໍ? ຂ້ອຍສາມາດສອນເຈົ້າໄດ້ໃດ.
ພຣະເຈົ້າສາມາດປົດປ່ອຍພວກເຮົາໃຫ້ເປັນອິດສະຫຼະຈາກສິ່ງທີ່ຄອບຄົວຂອງພວກເຮົາປະສົບກັບມັນ. ພຣະອົງຕ້ອງການທີ່ຈະອວຍພອນພວກເຮົາຈາກລຸ້ນສູ່ລຸ້ນ.

# ຄຳຖາມສົນທະນາ

1. ນິໄສບໍ່ດີອັນໃດທີ່ຕົກທອດຈາກບັນພະບູລຸດມາສູ່ຊ້ອຍ ແລະ ປ້າຂອງລາວ? ເປັນຫຍັງມັນຈຶ່ງບໍ່ດີ?
ຄວາມສາມາດພິເສດອັນໃດທີ່ຕົກທອດຈາກບັນພະບູລຸດທີ່ເປັນປະໂຫຍດແລະດີສຳລັບຊ້ອຍ ແລະ ປ້າຂອງລາວ?
ຄວາມສາມາດພິເສດນັ້ນມີປະໂຫຍດແນວໃດ? ຄອບຄົວຂອງເຈົ້າເດ ເປັນແນວໃດ?



ອົງພຣະຜູ້ເປັນເຈົ້າຊົງຄຸນຄວາມດີ ແລະ ຄວາມຮັກ
ແລະ ຄວາມສັດຊື່ຂອງພຣະອົງກໍດຳລົງຢູ່
ສືບໄປເປັນນິດ.
ເພງສັນລະເສີນ: 100: 5



# ກິດຈະກຳ

ຈາກສິ່ງທີ່ເຈົ້າໄດ້ແບ່ງປັນກ່ຽວກັບຄອບຄົວຂອງເຈົ້າ, ຜ່ານການອະທິຖານ, ຕັດສາຍສຳພັນຈາກບັນພະບູລຸດທີ່ອາດຈະສົ່ງຜົນໃຫ້ເຈົ້າໃນທາງລົບ. ຕົວຢ່າງ: ຂ້ອຍໄດ້ຕັດນິໄສບໍ່ດີໃນເລື່ອງການພະນັນໃນພຣະນາມພຣະເຢຊູ

ຈົ່ງທາສີໃສ່ຮູບທາງລຸ່ມນີ້. ຈົ່ງອະທິຖານເພື່ອພຣະເຈົ້າຈະອວຍພອນຄອບຄົວຂອງເຈົ້າໃນມື້ນີ້ ແລະອານາຄົດ.





បងធម៌កម្ពុជា
ALONGSIDERS CAMBODIA

www.alongsiders.org
Email: serey@alongsiders.org